ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------------------

ສຳນັກງານນາຍົກລັດຖະມົນຕີ ເລກທີ 248 /ນຍ

ນະຄອນຫລວງວຽງຈັນ, ວັນທີ 01 .12 . 2008

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດວ່າດ້ວຍໂພຊະນາການ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2006.
- ອີງຕາມ ມະຕິຕົກລົງຂອງ ກອງປະຊຸມລັດຖະບານ, ສະບັບເລກທີ 01/ນຍ, ລົງວັນທີ 19 ມັງກອນ 2006.
- ອີງຕາມ ການສະເໜີ ຂອງກະຊວງສາທາລະນະສຸກ, ສະບັບ ເລກທີ 662 ລົງວັນທີ 21 ຕຸລາ 2008.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:

ມາດຕາ 1: ຮັບຮອງເອົາ ນະໂຍບາຍແຫ່ງຊາດ ວ່າດ້ວຍໂພຊະນາການ ສະບັບເລກທີ 744/ກຊສ, ລົງວັນທີ 27/11/2008 ລົງລາຍເຊັນ ໂດຍລັດຖະມົນຕີວ່າການກະຊວງສາທາລະນະສຸກ ແລະ ປະກາດໃຊ້ ນະໂຍບາຍດັ່ງກ່າວໃນຂອບເຂດທົ່ວປະເທດ ເລີ່ມແຕ່ວັນທີ 2/12/2008 ເປັນຕົ້ນໄປ.

ມາດຕາ 2: ມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການສົມທົບກັບບັນດາກະຊວງ, ອົງການ, ທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍນະໂຍບາຍດັ່ງກ່າວ ອອກ

ເປັນຍຸດທະສາດ, ແຜນງານ, ນິຕິກຳ ແລະ ລະບຽບການຕ່າງໆ ເພື່ອຮັບປະກັນ ການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວໃຫ້ມີປະສິດທິຜົນ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື, ປະສານສົມທົບ ແລະ ພ້ອມກັນຈັດຕັ້ງປະຕິບັດ ນະໂຍບາຍແຫ່ງຊາດ ວ່າດ້ວຍໂພຊະນາການ ແລະ ດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

ມາດຕາ 4: ໃຫ້ລົບລ້າງ ບັນດາຂໍ້ກຳນົດ ແລະ ລະບຽບການຕ່າງໆ ທີ່ຂັດກັບເນື້ອໃນຂອງນະໂຍບາຍແຫ່ງຊາດ ວ່າດ້ວຍໂພຊະນາການສະບັບທີ່ໄດ້ຮັບຮອງ ແລະ ປະກາດໃຊ້ນີ້.

ມາດຕາ 5: ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ